# ປະຊາຊົນຍົກຍ້າຍຈັດສັນຂອງໂຄງການນ້ຳເທີນ 2 ມີລາຍຮັບລື່ນຄາດໝາຍ

**ວັນທີ 23 ກໍລະກົດ ປີ 2014, ທີ່ນະຄອນຫຼວງວຽງຈັນ, ທ່ານ ຄຳໃບ ດຳລັດ ເຈົ້າແຂວງຄຳມ່ວນ, ປະທານຄະນະກຳມະການຍົກຍ້າຍຈັດສັນ, ໄດ້ເຊັນຂໍ້ຕົກລົງສະບັບ ເລກທີ 252 ໃນ ວັນທີ 31 ເດືອນ ມັງກອນ ປີ 2014 ທີ່ມີເນື້ອໃນວ່າ: "ມາດຕາ 1 ຮອງຮັບວ່າ ລາຍຮັບຄົວເຮືອນ ຂອງປະຊາຊົນຍົກຍ້າຍຈັດສັນນາກາຍ ໄດ້ບັນລຸ ເປົ້າໝາຍຕາມທີ່ໄດ້ວາງໄວ້ແລ້ວ". ຜົນສຳເລັດດັ່ງກ່າວຖືວ່າເປັນຂີດໝາຍອັນສຳຄັນ ສຳລັບໂຄງການນ້ຳເທີນ 2 ແລະ ສະແດງໃຫ້ເຫັນວ່າປະຊາຊົນຍົກຍ້າຍຈັດສັນ ໄດ້ຮັບ ຜົນປະໂຫຍດ ຈາກແຜນງານ ສິ່ງແວດລ້ອມ ແລະ ສັງຄົມ ເຊິ່ງຈັດຕັ້ງປະຕິບັດໂດຍ ບໍລິສັດ ໄຟຟ້ານ້ຳເທີນ 2 (NTPC) ຮ່ວມກັບ ລັດຖະບານແຫ່ງ ສປປ ລາວ.**

ການບັນລຸ ເປົ້າໝາຍ ລາຍຮັບຄົວເຮືອນ ຂອງປະຊາຊົນຍົກຍ້າຍຈັດສັນນາກາຍ (ຫຼືລື່ນຂີດຄວາມທຸກຍາກ) ທີ່ກ່າວມາຂ້າງເທິງນັ້ນ ຖືວ່າເປັນຂີດໝາຍອັນສຳຄັນ ສຳລັບ ແຜນງານ ສິ່ງແວດລ້ອມ ແລະ ສັງຄົມ ຂອງ NTPC. ກ່ອນທີ່ຈະເກີດມີ ໂຄງການນ້ຳເທີນ 2 ປະຊາຊົນຍົກຍ້າຍຈັດສັນສ່ວນໃຫຍ່ ມີມາດຖານການດຳລົງຊີວິດ ຕ່ຳກວ່າ ຂີດຄວາມທຸກຍາກ. ອີງຕາມການສຳຫຼວດມາດຖານການດຳລົງຊີວິດຄັ້ງທີ່ 7 ໃນປີ 2013 ສະແດງໃຫ້ເຫັນວ່າ 97% ຂອງປະຊາຊົນຍົກຍ້າຍຈັດສັນແມ່ນມີມາດຖານການດຳລົງຊີວິດສູງກວ່າເສັ້ນຂີດໝາຍຄວາມທຸກຍາກ ແຕ່ ເມື່ອສະເລ່ຍ ຕາມດັດສະນີ ການບໍລິໂພກຂອງເຂົາເຈົ້າແລ້ວ ແມ່ນສູງກວ່າລະດັບມາດຕາຖານຄວາມທຸກຍາກແຫ່ງຊາດເຖິງ ສາມເທື່ອ. NTPC ແລະ ລັດຖະບານ ຕ່າງກໍ່ໄດ້ມີແຜນງານໄວ້ຮອງຮັບ ເພື່ອຊ່ວຍເຫຼືອ ປະຊາຊົນ ຍົກຍ້າຍຈັດສັນ ທີ່ຈັດຢູ່ໃນກຸ່ມ ຄອບຄົວທີ່ບໍ່ສາມາດກຸ້ມຕົນເອງໄດ້. ແຜນງານຍົກຍ້າຍຈັດສັນ ຂອງ NTPC ຈະສືບຕໍ່ຈົນກວ່າ ບັນດາຈຸດປະສົງ ແລະ ຂໍ້ກຳນົດຕ່າງໆ ຈະໄດ້ຖືກປະຕິບັດຈົນບັນລຸຄາດໝາຍ ເຊິ່ງໜຶ່ງໃນຄາດໝາຍທີ່ສຳຄັນ ແມ່ນລາຍຮັບຄົວເຮືອນ ຂອງປະຊາຊົນຍົກຍ້າຍຈັດສັນ.

ບົດລາຍງານຄວາມຄືບໜ້າຂອງໂຄງການ ແລະ ການປະເມີນຜົນຂອງຜູ້ຕິດຕາມກວດກາຈາກພາຍນອກ ສະແດງໃຫ້ເຫັນວ່າ ຂໍ້ກຳນົດ ແລະ ສິດທີ່ຄວນໄດ້ຮັບຕ່າງໆ ໄດ້ຖືກສະໜອງໃຫ້ປະຊາຊົນຍົກຍ້າຍຈັດສັນຢ່າງຄົບຖ້ວນ.

ປະຊາຊົນຍົກຍ້າຍຈັດສັນ ສາມາດເຂົ້າເຖິງ ແລະ ມີສິດ ຕໍ່ການນຳໃຊ້ດິນ, ການເຂົ້າເຖິງຕະຫຼາດ ແລະ ການບໍລິການສາທາລະນະສຸກ ທີ່ ສະດວກຂຶ້ນ ພ້ອມທັງ ໄດ້ຮັບສິດທິພິເສດໃນການຫາປາໃນອ່າງເກັບນ້ຳ ແລະ ເຂດປ່າໄມ້ຈັດສັນ.

ຕິດຕໍ່:

**ຝ່າຍສື່ສານມວນຊົນ**

**(856 21) 263900**

info@namtheun2.com

ອີງຕາມ ທ່ານ ຄຳໃບ ດຳລັດ ເຈົ້າແຂວງໆຄຳມ່ວນ, ໂຄງການນ້ຳເທີນ 2 ໄດ້ປະກອບສ່ວນທີ່ສຳຄັນໃນການເຮັດໃຫ້ ເມືອງນາກາຍຫຼຸດພົ້ນອອກຈາກຄວາມທຸກຍາກ ໂດຍໃຫ້ການຊ່ວຍເຫຼືອທາງດ້ານທຶນຮອນ ແລະ ດ້ານວິຊາການ. ເພື່ອຍົກລະດັບມາດຖານການດຳລົງຊີວິດຂອງປະຊາຊົນນາກາຍ. ພ້ອມດຽວກັນນັ້ນ, ໂຄງການດັ່ງກ່າວຍັງປະກອບສ່ວນເຂົ້າໃນການສ້າງຄວາມເຂັ້ມໃຫ້ພະນັກງານລັດຈາກຂັ້ນທ້ອງຖິ່ນຈົນເຖິງຂັ້ນສູນກາງ. ທ່ານ ຄຳໃບ ໄດ້ກ່າວວ່າ “ກ່ອນມີໂຄງການນ້ຳເທີນ 2, ຈຳນວນທຸກລະກິດ ແລະ ການຈ້າງງານແມ່ນມີໜ້ອຍຫຼາຍ ແຕ່ເສດຖະກິດທ້ອງຖິ່ນໄດ້ຂະຫຍາຍຕົວຢ່າງວອງໄວ ເມື່ອມີ ໂຄງການນີ້.” ທ່ານ ຄຳໃບ ຍັງໄດ້ກ່າວຕື່ມວ່າ “ໂຄງການນ້ຳເທີນ 2 ເປັນໂຄງການທີ່ມີຄວາມສຳຄັນທີ່ຊ່ວຍຂັບເຄື່ອນ ເສດຖະກິດຂອງເມືອງ ຂອງແຂວງ ແລະ ສປປ ລາວ”

ພັນທະຂອງໂຄງການຕໍ່ປະຊາຊົນທີ່ຖືກຍົກຍ້າຍແມ່ນເຮັດໃຫ້ຊີວິດການເປັນຢູ່ດີຂື້ນກວ່າເກົ່າ ແລະ ພ້ອມທັງໄດ້ສ້າງບ້ານ, ສຸກສາລາ, ໂຮງຮຽນ, ທົນທາງ, ນ້ຳບາດານ ແລະອື່ນໆ, ລວມທັງການຊ່ວຍເຂົາເຈົ້າປະກອບອາຊີບໃໝ່ ໂດຍມີການຊ່ວຍເຫຼືອທາງດ້ານວິຊາການ.

ບໍລິສັດ ໄຟຟ້ານ້ຳເທີນ 2 ດຳເນີນໂຄງການໄຟຟ້ານ້ຳຕົກທີ່ມີກຳລັງການຜະລິດ 1,070 ເມກາວັດຢູ່ແຂວງຄຳມ່ວນ ພາກກາງຂອງລາວ. ໂຄງການນ້ຳເທີນ 2 ໄດ້ຍົກຍ້າຍປະຊາຊົນ ປະມານ 6,300 ຄົນ ໃນ 16 ບ້ານ ທີ່ຢູ່ເທິງ ພູພຽງນາກາຍ ເພື່ອເຮັດໃຫ້ສາມາດເກັບກັກນ້ຳໃນອ່າງ.

ກ່ອນຈະມີໂຄງການ, ເມືອງນາກາຍເປັນໜຶ່ງໃນເມືອງທີ່ທຸກຍາກທີ່ສຸດໃນ ສປປ ລາວ: ພື້ນຖານໂຄງລ່າງມີຈຳນວນຈຳກັດ, ການເຂົ້າເຖິງການບໍລິການດ້ານສາທາລະນະສຸກ ແລະ ການສຶກສາມີຂໍ້ຈຳກັດ, ການຄ້າຂາຍ ແລະ ການຈ້າງງານກໍ່ມີໜ້ອຍ, ປະຊາຊົນດຳລົງຊີວິດແບບພໍພຽງ ແລະ ບໍ່ລື້ງເຄີຍກັບການດຳລົງຊີວິດທີ່ໃຊ້ເງິນ.

ສຳລັບຂໍ້ມູນເພີ່ມຕື່ມ: [www.namtheun2.com](http://www.namtheun2.com)

ຕິດຕໍ່:

ຝ່າຍສື່ສານມ່ວນຊົນ

(856 21) 263900

info@namtheun2.com